ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ: 0055 -/ຜ-ຟລ
ນະຄອນຫຼວງວຽງຈັນ, ວັນທີ 10 JAN 2020

# ໜັງສືແຈ້ງເຊີນປະມູນ

1. ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ), ມີຄວາມຕ້ອງການ ການບໍລິການ ໂຄງການ ສະໜອງ ແລະ ຕິດຕັ້ງ ຈັກ Diesel 600 KVA ເພື່ອຕິດຕັ້ງເພີ່ມໃສ່ ໂຮງຈັກເກົ່າ ເຂື່ອນໄຟຟ້ານ້ຳງື່ມ-1 ດ້ວຍການດຳເນີນການປະມູນເປີດກວ້າງພາຍໃນ.

2. ການປະມູນ ຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງຂອງ ຜ-ຟຟລ ພາຍໃຕ້ລະບຽບຈັດຊື້-ຈັດຈ້າງ ຜ-ຟຟລ, ສະບັບລົງວັນທີ 19/02/2018.

3. ຜ-ຟຟລ ຂໍເຊີນບັນດາບໍລິສັດ ທີ່ມີເງື່ອນໄຂເໝາະສົມ, ມີໃບອະນຸຍາດດຳເນີນທຸລະກິດຖືກຕ້ອງຕາມກົດໝາຍ ແລະ ພົວພັນກັບການບໍລິການດັ່ງກ່າວເຂົ້າຮ່ວມ.

4. ບໍລິສັດ ທີ່ມີເງື່ອນໄຂເໝາະສົມ ສົນໃຈສາມາດຕິດຕໍ່ພົວພັນ ແລະ ກວດກາເບິ່ງເອກະສານປະມູນໄດ້ທີ່ ສຳນັກງານໃຫຍ່ ຜ-ຟຟລ, ຝ່າຍແຜນການ, ພະແນກຈັດຊື້, ໃນວັນລັດຖະການ, ນັບຈາກວັນທີ 13-31/01/2020 ຄື: ຕອນເຊົ້າເວລາ 08:30- 12:00 ໂມງ ແລະ ຕອນບ່າຍ ເວລາ 13:00-17:00 ໂມງ, ສຳນັກງານຕັ້ງຢູ່:ຖະໜົນມິດຕະພາບລາວ - ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງ ວຽງຈັນ, ສປປ.ລາວ, ຕູ້ ປ.ນ 2392, ໂທລະສັບ: (856-21) 316 142, ໂທລະສານ: (856-21) 316 141.

5. ບໍລິສັດ ທີ່ຕ້ອງການຊື້ເອກະສານປະມູນ, ຕ້ອງຍື່ນໜັງສືສະເໜີຊື້ຊອງປະມູນເຖິງ ຜ-ຟຟລ ຕາມທີ່ຢູ່ທີ່ລະບຸໃນຂໍ້ 4, **ຖ້າບໍ່ມີໜັງສືສະເໜີຂໍຊື້ຊອງປະມູນ, ຜ-ຟຟລ ຈະບໍ່ສາມາດຂາຍຊອງປະມູນໃຫ້ທ່ານໄດ້**, ການຂາຍຊອງປະມູນຈະໄດ້ເລີ່ມຂາຍແຕ່ວັນທີ 13/01/2020 – 31/01/2020, ໃນວັນ ແລະ ເວລາທີ່ລະບຸໃນຂໍ້4, ໃນລາຄາ 250.000 (ສອງແສນຫ້າສິບພັນກີບຖ້ວນ) ກີບ/ຊຸດ. ວິທີການຊຳລະຕ້ອງຊຳລະເປັນເງິນສົດເທົ່ານັ້ນ, ໂດຍຈຳນວນເງິນດັ່ງກ່າວນີ້ ຜ-ຟຟລ ຈະບໍ່ມີການສົ່ງຄືນ.

6. ການລົງສຳຫຼວດສະຖານທີ່ຕົວຈິງ, ເກັບຂໍ້ມູນ ຈະຈັດຂຶ້ນໃນວັນ ແລະ ເວລາດັ່ງນີ້:

   - ເຂື່ອນໄຟຟ້ານ້ຳງື່ມ-1: ວັນທີ 04/02/2020, ເວລາ 10:00 ໂມງ ເປັນຕົ້ນໄປ.

   ສຳລັບຄ່າໃຊ້ຈ່າຍຕ່າງໆທີ່ເກີດຂຶ້ນ ແລະ ການເດີນທາງທັງໝົດແມ່ນຄວາມຮັບຜິດຊອບຂອງຜູ້ເຂົ້າຮ່ວມປະມູນ.

7. ຊອງປະມູນຕ້ອງສົ່ງໃຫ້ຕາມທີ່ຢູ່ ທີ່ລະບຸໃນຂໍ້ 4, ກ່ອນເວລາ 14:00ໂມງຂອງວັນທີ 26/02/2020. ກໍລະນີທີ່ທ່ານຫາກສົ່ງຊ້າກວ່າເວລາທີ່ກຳນົດໄວ້, ຜ-ຟຟລ ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ສຳລັບເວລາເປີດຊອງປະມູນຈະໄດ້ເລີ່ມເປີດໃນເວລາ 14:00ໂມງເປັນຕົ້ນໄປຂອງວັນດຽວກັນ. ໂດຍເປີດຊ້ອງໜ້າຄະນະການຈັດຊື້ ຜ-ຟຟລ ແລະ ຕົວແທນຂອງຜູ້ເຂົ້າຮ່ວມປະມູນທີ່ສົນໃຈເຂົ້າຮ່ວມນຳ.

**ຜູ້ອຳນວຍການໃຫຍ່**

ພະລັງງານ ແລະ ບໍ່ແຮ່ ກະຊວງ
ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
EDL-Generation Public Company
ນະຄອນຫຼວງ ວຽງຈັນ

ທອງເພັດ ດ້ວງເງິນ
ຮອງຜູ້ອຳນວຍການໃຫຍ່